ສຳນັກງານ ຄຄຊ
ຂາເຂົ້າ ເລກທີ 510
ວັນທີ 18 MAY 2015
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະປ່າໄມ້
ທະນາຄານແຫ່ງ ສ.ປ.ປ.ລາວ
ຂາເຂົ້າ ເລກທີ: 1934
ວັນທີ: 15.5.2015
ໂທລະສັບ 243710

ເລກທີ 1052/ກປ

ນະຄອນຫຼວງວຽງຈັນ, ວັນທີ 13 MAY 2015

## ຄຳສັ່ງ

### ກ່ຽວກັບການເພີ່ມທະວີຄວາມຮັບຜິດຊອບຕໍ່ການເກັບກ່ຽວມ້ຽນມັດຜົນຜະລິດລະດູແລ້ງ ຕິດພັນກັບການກະກຽມເຂົ້າສູ່ການຜະລິດລະດູຝົນ ປີ 2015 ຢ່າງແຂງແຮງ ແລະຕໍ່ເນື່ອງ

ເຖິງ: - ທ່ານ ຫົວໜ້າຫ້ອງການ, ກົມ ແລະສະຖາບັນອ້ອມຂ້າງກະຊວງ.
- ທ່ານ ຫົວໜ້າພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ.

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ເລກທີ 262/ນຍ, ລົງວັນທີ 28 ມິຖຸນາ 2012 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງກະສິກຳ ແລະປ່າໄມ້;
- ອີງຕາມມະຕິຕົກລົງຂອງກອງປະຊຸມລັດຖະບານ ສະໄໝສາມັນປະຈຳເດືອນມີນາ 2015 ເລກທີ 04/ລບ, ລົງວັນທີ 01 ເມສາ 2015;
- ອີງຕາມແຜນພັດທະນາກະສິກຳ ແລະປ່າໄມ້ ສົກປີ 2014 - 2015.

ໃນການຜະລິດລະດູແລ້ງສົກປີ 2014 - 2015 ນີ້, ອຳນາດການປົກຄອງທ້ອງຖິ່ນແຕ່ລະຂັ້ນ ໄດ້ສຸມຄວາມພະຍາຍາມຢ່າງຕັ້ງໜ້າ ປຸກລະດົມຂົນຂວາຍຊາວກະສິກອນ ແລະປະຊາຊົນບັນດາເຜົ່າໃນທ້ອງຖິ່ນຂອງຕົນ ລົງມືທຳການຜະລິດແຕ່ຕົ້ນລະດູການ ຢ່າງເປັນຂະບວນຟົດຟື້ນ, ສາມາດປັກດຳນາແຊງໄດ້ 101.525 ເຮັກຕາ, ປູກພືດລະດູແລ້ງໄດ້ 138.930 ເຮັກຕາ. ມາຮອດປະຈຸບັນ ທົ່ວປະເທດ ໄດ້ສຳເລັດການເກັບກ່ຽວມ້ຽນມັດເຂົ້ານາແຊງແລ້ວ 61.126 ເຮັກຕາ ເທົ່າກັບ 60% ຊຶ່ງຄາດວ່າຈະສຳເລັດໃນທ້າຍເດືອນພຶດສະພານີ້.

ເພື່ອຍູ້ແຮງການຜະລິດເຂົ້ານາປີ 2015 ໃຫ້ບັນລຸໃນເນື້ອທີ່ 773.790 ເຮັກຕາ, ດ້ວຍສະມັດຕະພາບສະເລ່ຍ 4,3 ໂຕນ/ເຮັກຕາ, ຜົນຜະລິດ 3.352.600 ໂຕນ ປະກອບສ່ວນໃຫ້ແກ່ການຜະລິດເຂົ້າລວມໃຫ້ໄດ້ 4,2 ລ້ານໂຕນຂຶ້ນໄປ, ຕອບສະໜອງໃຫ້ແກ່ການຜະລິດສະບຽງອາຫານຮັບໃຊ້ການບໍລິໂພກພາຍໃນ ແລະເປັນສິນຄ້າສົ່ງອອກຢ່າງແຂງແຮງ, ແນໃສ່ເຮັດໃຫ້ຂະບວນການຜະລິດກາຍເປັນຂອງມະຫາຊົນຢ່າງຟົດຟື້ນ ນັ້ນ,

### ລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້ ອອກຄຳສັ່ງ:

1. ໃຫ້ ກົມປູກຝັງ ແລະກົມສົ່ງເສີມກະສິກຳ ແລະສະຫະກອນ ຮັບຮ້ອນເປັນເຈົ້າການສົມທົບກັບ ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ ເອົາໃຈໃສ່ລົງຊຸກຍູ້ປະຊາຊົນ ຮຸ່ນຮ່ຽວເກັບກ່ຽວມ້ຽນ

ມັດເຂົ້ານາແຊງ ແລະພືດລະດູແລ້ງ ໃຫ້ສຳເລັດໃນທ້າຍເດືອນພຶດສະພາ, ທັງນີ້ກໍເພື່ອຫຼີກລ່ຽງຜົນກະທົບຈາກລະດູຝົນ ອັນຈະເຮັດໃຫ້ຄຸນນະພາບຂອງຜົນຜະລິດ ຕົກຕໍ່າ ແລະເຊື່ອມຄຸນ, ພ້ອມກັນນັ້ນ ກໍຕ້ອງຮີບຮ້ອນກະກຽມເຂົ້າການຜະລິດລະດູຝົນ 2015 ໃຫ້ທັນກັບ ວັນເປີດຂະບວນການຜະລິດລະດູຝົນໃນຂອບເຂດທົ່ວປະເທດ ຄື: ວັນທີ 15 ພຶດສະພາ 2015, ໃຫ້ຖືເອົາຂະບວນການນີ້ ຕິດພັນກັບຂະບວນການແຂ່ງຂັນລວມ ພາຍໃຕ້ຄຳຂວັນ **"ຮັກຊາດ ແລະພັດທະນາ"** ຕາມທີ່ລະບຸໄວ້ໃນດຳລັດຂອງນາຍົກລັດຖະມົນຕີ ເລກທີ 121/ນຍ, ລົງວັນທີ 24 ກຸມພາ 2010;

2. ໃຫ້ ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ ແລະນະຄອນຫຼວງວຽງຈັນ ສືບຕໍ່ບຸກທະລຸຢ່າງແຂງແຮງກວ່າເກົ່າ ໃນການທັນເອົາພະນັກງານ ລົງນຳພາຊາວກະສິກອນ ຕົກກ້າ ແລະປັກດຳເຂົ້ານາປີ ຢ່າງຊ້າໃຫ້ສຳເລັດພາຍໃນອາທິດທີ 3 ຂອງເດືອນສິງຫາ 2015. ສະເພາະນາປີ 2015 ນີ້ ຕ້ອງສູ້ຊົນບັນລຸຜົນຜະລິດໃຫ້ໄດ້ 3.352.600 ໂຕນ, ໃນເນື້ອທີ່ 773.790 ເຮັກຕາ ດ້ວຍສະມັດຕະພາບ 4,3 ໂຕນ/ເຮັກຕາ, ພ້ອມດຽວກັນ ກໍຕ້ອງໄດ້ຊຸກຍູ້ສົ່ງເສີມໃຫ້ຊາວກະສິກອນ ປູກພືດຜັກ ເພື່ອຕອບສະໜອງການບໍລິໂພກໃຫ້ແກ່ສັງຄົມ ໄດ້ຢ່າງພຽງພໍ;

3. ໃຫ້ ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ ກຳນົດເຂດຈຸດສຸມຕົວແບບ ລວມທັງບ້ານ 03 ສ້າງ ແລະບ້ານຈຸດສຸມພັດທະນາ ຕາມທິດນຳທີ່ວ່າ *"ທຸກວຽກຈຸດສຸມ, ສຳຄັນ ຕ້ອງມີຜູ້ເຮັດຕົວຈິງ ແລະມີຜູ້ຮັບຜິດຊອບນຳພາ - ຊີ້ນຳ ເປັນປະຈຳ"*, ຕ້ອງມີການສົມທົບຢ່າງກົມກຽວ ລະຫວ່າງ ການສ້າງເປັນຈຸດສຸມ ແລະທົ່ວໄປ. ສະເພາະເຂດຈຸດສຸມ ຕ້ອງຮັບປະກັນສະມັດຖະພາບສະເລ່ຍ ບໍ່ໃຫ້ຫຼຸດ 5,5 ໂຕນ/ເຮັກຕາ ໂດຍມີການນຳໃຊ້ແນວພັນໃໝ່ທີ່ໃຫ້ໄດ້ຜົນຜະລິດສູງ, ນຳໃຊ້ເຕັກນິກກະເສດສຸມ ຢ່າງຖືກຕ້ອງ ຕິດພັນກັບການນຳໃຊ້ກົນຈັກເຂົ້າຊ່ວຍ ຕາມທິດຫັນເປັນອຸດສາຫະກຳ ແລະທັນສະໄໝ;

4. ໃຫ້ ກົມສົ່ງເສີມກະສິກຳ ແລະສະຫະກອນ ສົມທົບກັບ ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ ສືບຕໍ່ຫັນເອົາວິຊາການລົງຫາຈຸດສຸມກຸ່ມບ້ານ ເພື່ອນຳພາປະຊາຊົນເຮັດຕົວຈິງ ຕາມທິດນຳທີ່ວ່າ: **"ນຳພາປະຊາຊົນປູກ, ນຳປະຊາຊົນພາລ້ຽງ ແລະຖ່າຍທອດເຕັກນິກວິຊາການໃຫ້ປະຊາຊົນ"** ເປັນຕົ້ນເຕັກນິກການເຮັດກະເສດສຸມ, ການຕົກກ້າ, ການປັກດຳ, ການໃສ່ຝຸ່ນ ຕາມທິດກະສິກຳສະອາດ ຕິດພັນກັບການປຸກລະດົມປະຊາຊົນຂົນຝຸ່ນຄອກ, ຝຸ່ນບົ່ມ, ຝຸ່ນຊີວະພາບ ລົງໃສ່ນາ ເຮັດຕາມທິດທີ່ວ່າ: **"ເດີ່ນບ້ານສະອາດ ທົ່ງນາງາມ"**, ພ້ອມນັ້ນ ກໍເອົາໃຈໃສ່ໂຄສະນາເຜີຍແຜ່ເຕັກນິກໃໝ່ ໂດຍຜ່ານສື່ຕ່າງໆຂອງລັດເຊັ່ນ: ວິທະຍຸ, ໂທລະພາບ, ໜັງສືພິມ, ປຶ້ມຄູ່ມື, ໂປສເຕີ, ແຜ່ນພັບ, ວີດີໂອ, ຊີດີ ແລະອື່ນໆ ຢ່າງເປັນຂະບວນ;

5. ໃຫ້ ກົມແຜນການ ແລະການຮ່ວມມື, ກົມປູກຝັງ, ກົມຊົນລະປະທານ ແລະກົມສົ່ງເສີມກະສິກຳ ແລະສະຫະກອນ ປະສານສົມທົບກັບພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ ເພື່ອກຳນົດຄວາມຕ້ອງການປັດໄຈການຜະລິດ, ທຶນຮອນຂອງຊາວກະສິກອນ ແລະຈຸດສຸມຜະລິດສິນຄ້າປາຍແຫຼມ ເພື່ອເປັນບ່ອນອີງໃນການສະເໜີໃຫ້ທະນາຄານ ສະໜອງສິນເຊື່ອແກ່ຊາວກະສິກອນ, ສະມາຄົມປູກເຂົ້າ, ກຸ່ມໂຮງສີເຂົ້າ, ຜູ່ເກັບຊື້, ຜູ່ປະກອບການໂຮງອົບ ແລະສາງເກັບມ້ຽນຕ່າງໆ, ພ້ອມກັນນັ້ນ ກໍໃຫ້ຊຸກຍູ້ສົ່ງເສີມຊາວກະສິກອນ ໃນການສ້າງຄອບຄົວຕົວແບບດ້ານການຜະລິດເຂົ້າ ຕິດພັນກັບການກຽມຄວາມພ້ອມດ້ານຕ່າງໆ ໃນການຮັບມືກັບໄພແຫ້ງແລ້ງ ຫຼືໄພນ້ຳຖ້ວມ ທີ່ອາດຈະເກີດຂຶ້ນໃນບາງບໍລິເວນ ເພື່ອແກ້ໄຂໃຫ້ທັນເວລາ;

6. ໃຫ້ ກົມລ້ຽງສັດ ແລະການປະມົງ ສົມທົບກັບ ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ ແລະນະຄອນຫຼວງວຽງຈັນ ຊຸກຍູ້ສົ່ງເສີມຊາວກະສິກອນ ປັບປຸງ, ຂະຫຍາຍພັນສັດ, ປາ ແລະສັດນ້ຳ ລວມທັງພັດທະນາອາຫານສັດ ແລະອາຫານປາ, ພ້ອມກັນນັ້ນ ກໍຕ້ອງສືບຕໍ່ເຝົ້າລະວັງການແຜ່ລະບາດຂອງພະຍາດສັດ ໂດຍສະເພາະ ແມ່ນພະຍາດໄຂ້ຫວັດສັດປີກສາຍພັນໃໝ່ H7N9, H5N1 ແລະການປະຕິບັດມາດຕະການສະກັດກັ້ນການຄ້າຂາຍສັດ ແບບບໍ່ຖືກຕ້ອງຕາມຊາຍແດນລະຫວ່າງຊາດຢ່າງເຂັ້ມງວດ ເພື່ອສະກັດກັ້ນການແຜ່ລະບາດຂອງພະຍາດສັດ ຕິດພັນກັບການປຸກລະດົມຂະບວນການສັກຢາປ້ອງກັນພະຍາດສັດ ໃຫ້ໄດ້ໃນອັດຕາສ່ວນສູງ ໂດຍຖືເອົາວັນທີ 11 ພະຈິກ 2015 ເປັນວັນສ້າງຂະບວນການສັກຢາກັນພະຍາດສັດໃຫ້ກວ້າງຂວາງໃນທົ່ວປະເທດ;

7. ມອບໃຫ້ ບັນດາກົມ ແລະສະຖາບັນອ້ອມຂ້າງກະຊວງ ອອກຄຳແນະນຳດ້ານວິຊາການ ເພື່ອຜັນຂະຫຍາຍຄຳສັ່ງສະບັບນີ້ ເຂົ້າສູ່ພຶດຕິກຳຕົວຈິງ ຖືເອົາ "ການຜະລິດກະສິກຳ ເປັນສະໜາມລົບອັນດັບໜຶ່ງ" ເຮັດໃຫ້ຂະແໜງການສາຍຕັ້ງຂອງຕົນຢູ່ທ້ອງຖິ່ນ ມີຄວາມເປັນເອກະພາບ ແລະປະຕິບັດໄປໃນລວງດຽວກັນ ຢ່າງກົມກຽວ. ຜ່ານການຈັດຕັ້ງປະຕິບັດ ມີຂໍ້ສະດວກ, ຫຍຸ້ງຍາກແນວໃດ ໃຫ້ລາຍງານການນຳກະຊວງກະສິກຳ ແລະປ່າໄມ້ ໄດ້ຮັບຊາບຢ່າງເປັນປົກກະຕິ ເພື່ອຫາວິທີແກ້ໄຂຢ່າງທັນການ;

8. ຄຳສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້

ບ່ອນນຳສົ່ງ:

| | | |
|---|---|---|
| 1. | ຫ້ອງວ່າການສູນກາງພັກ | 01 ສະບັບ (ໃຊ້ຕາງລາຍງານ); |
| 2. | ຫ້ອງການວ່າການລັດຖະບານ | 01 ສະບັບ (ໃຊ້ຕາງລາຍງານ); |
| 3. | ກ/ຊ ແຜນການ ແລະການລົງທຶນ | 01 ສະບັບ (ເພື່ອຊາບ); |
| 4. | ກ/ຊ ອຸດສາຫະກຳ ແລະການຄ້າ | 01 ສະບັບ (ເພື່ອໃຫ້ຄວາມຮ່ວມມື); |
| 5. | ກະຊວງ ຖວທ | 01 ສະບັບ (ເພື່ອຊ່ວຍອອກຂ່າວ); |
| 6. | ທະນາຄານແຫ່ງ ສປປ ລາວ | 01 ສະບັບ (ເພື່ອຊ່ວຍຊຸກຍູ້); |
| 7. | ຫ້ອງວ່າການປົກຄອງແຂວງ, ນະຄອນຫຼວງວຽງຈັນ ບ່ອນລະ | 01 ສະບັບ (ເພື່ອຊ່ວຍຊຸກຍູ້ຕິດຕາມ); |
| 8. | ເກັບມ້ຽນ | 01 ສະບັບ. |

ກະຊວງກະສິກຳ ແລະ ປ່າໄມ້
ລັດຖະມົນຕີ

ວິໄລວັນ ພົມເຂ

ສົ່ງເພື່ອຮຽນເພື່ອຊາບ:
- ທ່ານຜູ້ວ່າການ
- ຮອງ
- [illegible]

15/6/2015



ພາສີ ພົມມະກອນ